ທ່ານເອງ ແລະ ຄອບຄົວ ອາດຈະບໍ່ສະບາຍໃຈ ພາຍຫລັງການບົ່ງມະຕິ ແລະ ຮັບຮູ້ວ່າທ່ານກຳລັງເປັນພະຍາດວັນນະໂລກ ຫລື ພະຍາດປອດແຫ້ງ.

ພະຍາດວັນນະໂລກນີ້ເປັນພະຍາດຫນຶ່ງທີ່ສາມາດຕິດຕໍ່ຈາກຜູ້ຫນຶ່ງຫາອີກຜູ້ຫນຶ່ງ ຫລື ຫາຫລາຍຄົນ ຜ່ານການໄອ, ຈາມ, ການທີ່ມນ້ຳລາຍ ຫລື ຂີ້ກະເທີ້...ແຕ່ວ່າທ່ານບໍ່ຕ້ອງຕົກໃຈ ແລະ ເປັນຫ່ວງ ປະຈຸບັນນີ້ດ້ວຍວິທີການປິ່ນປົວທີ່ກ້າວຫນ້າ ທ່ານສາມາດປິ່ນປົວໃຫ້ຫາຍຂາດໄດ້ ດ້ວຍການກິນຢາແບບຕໍ່ເນື່ອງ ແລະ ປົກກະຕິ ຕາມວາລະຂອງການປິ່ນປົວ.

ສິ່ງທີ່ຕ້ອງເປັນຫ່ວງ ແລະ ສຳຄັນທີ່ສຸດແມ່ນ ການກິນຢາທີ່ຕໍ່ເນື່ອງ ເຖິງແມ່ນວ່າອາການພະຍາດຈະຫາຍໄປພາຍຫລັງປິ່ນປົວໄດ້ໄລຍະຫນຶ່ງ ແຕ່ທ່ານຕ້ອງ ກິນຢາໃຫ້ຄົບກຳນົດຕາມຫລັກການຂອງການປິ່ນປົວພະຍາດວັນນະໂລກ ບາງທີ່ມັນອາດແມ່ນເວລາທີ່ຫຍຸ້ງຫຍາກສຳລັບທ່ານ ແຕ່ທ່ານບໍ່ຕ້ອງທໍ້ຖອຍ ແລະ ນ້ອຍໃຈ ໃນການຕໍ່ສູ້ເພື່ອເອົາຊະນະກັບພະຍາດວັນນະໂລກໃຫ້ທ່ານຄິດສະເຫມີວ່າ ຄຽງຂ້າງທ່ານຍັງມີຄອບຄົວຂອງທ່ານ, ທ່ານຫມໍ ແລະ ພະນັກງານສາທາລະນະສຸກທີ່ຈະຊ່ວຍທ່ານເພື່ອໃຫ້ສຳເລັດການປິ່ນປົວນີ້.

ອີກສິ່ງຫນຶ່ງ ທ່ານຄວນເອົາໃຈໃສ່ແມ່ນ ໃຫ້ສືບຕໍ່ການກິນຢາໃຫ້ສຳເລັດ ໃນກໍລະນີທີ່ທ່ານກັບເມືອປະເທດຂອງທ່ານ "ຂໍໃຫ້ໂຊກດີ"